# ພາບຣວມຣະດັບສູງກ່ຽວກັບຣະບົບການເກັບພາສີຊັບສິນ?

<table>
<tr>
<td rowspan="2">ຫ້ອງການຝ່າຍປະເມີນພາສີຊັບສິນ ຂອງເມືອງມິນນີອາໂປລິສ ມີໜ້າທີ່ທຳການປະເມີນຣາຄາ ແລະຈຳແນກປະເພດຂອງອະສັງຫາຣິມຊັບ ແລະຊັບສິນສ່ວນບຸກຄົນ<br><br>ອີງຕາມກົດໝາຍຂອງຣັດແລ້ວ ຣາຄາ ແລະການ ຈແນກປະເພດຂອງອະສັງຫາຣິມຊັບດັ່ງກ່າວ ໄດ້ກຳນົດເອົາວັນທີ່ 2 ເດືອນມົກຣາ ແລະວັນທີ່ 1 ເດືອນທັນວາຂອງແຕ່ລະປີເປັນຕົ້ນໄປ ເປັນຫຼັກ. ຫ້ອງການຝ່າຍປະເມີນພາສີຊັບສິນດັ່ງກ່າວ ໄດ້ປະຕິບັດວຽກງານ ຕູອດທັ້ງປີ ເພື່ອກະ ຫຼືຄາດຄະເນຣາຄາຕລາດຂອງຊັບສິນໄວ້ສຳຫຼັບວັນທີ່ 2 ເດືອນມົກຣາ ຄັ້ງຕໍ່ໄປ. ການປະເມີນພາສີຊັບສິນຂອງວັນທີ່ 2 ເດືອນມົກຣານີ້ ຈະເປັນພື້ນຖານຂອງການເສັຽພາສີ ສຳຫຼັບປີຕໍ່ໄປ.</td>
<td>ຜູ້ປະເມີນຊັບສິນ ຫຼືອັດຕຣາພາສີ ຈະອີງການກະ ຫຼືການຄາດຄະເນຣາຄາຕລາດໃສ່ລັກສະນະພິເສດຂອງຊັບສິນ ຊຶ່ງມີຜົນກະທົບຕໍ່ຣາຄາຕລາດ ເຊັ່ນຂນາດ, ອາຍຸ, ສະພາບ ແລະ ການເຮັດຫ້ອງໃຕ້ດິນເສັດຮຽບຮ້ອຍແລ້ວ ນອກເໜືອໄປຈາກສ່ວນປະກອບ ທີ່ມີລັກສະນະ ພິເສດ ເຊັ່ນເຕົາຜີງໄຟ, ຫ້ອງນ້ຳທີ່ເຮັດເພີ່ມຕື່ມ,ທາງຍ່າງ ແລະປັດຈັຍອື່ນໆ ອີກ ເປັນຕົ້ນ<br>ຜູ້ປະເມີນຊັບສິນ ຫຼືອັດຕຣາພາສີ ຈະທຳການວິເຄາະການຂາຍຊັບສິນໃນແຕ່ລະຊຸມຊົນຢ່າງລະອຽດ ເພື່ອຄວາມເຂົ້າໃຈເຖິງຄວາມໂນ້ມ ອຽງຂອງຕລາດທ້ອງຖິ່ນ ອັນຣວມໄປເຖິງການກວດສອບຣາຄາຂາຍຊັບສິນ ໃນທ້ອງຖິ່ນ ອື່ນໆນຳ ດ້ວຍ, ກະຊວງພາສີຣາຍໄດ້ຂອງຣັດຈະທຳການທົບທວນເບິ່ງຂໍ້ມູນຕ່າງໆກ່ຽວກັບ ການຂາຍຊັບສິນດັ່ງກ່າວ ເພື່ອຮັບປະກັນວ່າຣາຄາຊື້ຂາຍຊັບສິນດັ່ງກ່າວນັ້ນ ຈະມີຄວາມເປັນທັມ ແລະເທົ່າທຽມກັນ,<br><br>ເມືອງມິນນີອາໂປລິສຈະຕ້ອງທຳການກວດຂ້າງໃນ ແລະຂ້າງນອກຂອງ ຊັບສິນຂອງທ່ານ ຖ້າຫາກວ່າທ່ານໄດ້ປຸກຂຶ້ນໃໝ່ ຫຼືສ້ອມແປງ ຫຼືປັບປຸງຕົບແຕ່ງຊັບສິນຂອງ ທ່ານໃໝ່ ຫຼືຢ່າງນ້ອຍທີ່ສຸດທຸກໆຫ້າປີ. ເຖິງແມ່ນວ່ານັກປະເມີນຊັບສິນ ຫຼືອັດຕຣາພາສີ ຈະບໍ່ໄດ້ທຳການ ກວດຊັບສິນຂອງທ່ານທຸກປີກໍ່ຕາມ ແຕ່ຣາຄາ ຫຼືຣາຄາປະເມີນຊຶ່ງໜ້າຈະຂາຍ ໄດ້ໃນ ຕລາດເສຣີນັ້ນອາດຈະຖືກແກ້ໄຂເພື່ອໃຫ້ສອດຄ່ອງກັບກິຈກັມຕ່າງໆໃນຕລາດຂອງທ້ອງຖິ່ນ</td>
</tr>
<tr>
<td>ຜູ້ປະເມີນຊັບສິນ ຫຼືອັດຕຣາພາສີ ຈະນຳເອົາການຈຳແນກປະເພດຂອງຊັບສິນຊຶ່ງທາງຣັດໄດ້ໃຫ້ຄຳນິຍາມໄວ້ແລ້ວ ມາໃຊ້ກັບຊັບສິນຂອງທ່ານວ່າ ໃນປີກາຍນີ້ ທ່ານໄດ້ເອົາຊັບສິນຂອງທ່ານໄປໃຊ້ໃນລັກສະນະໃດ (ຕົວຢ່າງເຊັ່ນ ເຂດທີ່ຈັດເປັນບ່ອນພັກອາສັຍ, ຍ່ານການ ຄ້າ, ເຄຫະສະຖານ, ບໍ່ແມ່ນເຄຫະສະຖານ, ອາພາດເມັນ, ໄຮ່ນາ ແລະອື່ນໆ..)</td>
</tr>
<tr>
<td>ຜູ້ເປັນເຈົ້າຂອງ ຫຼືຜູ້ທີ່ມີກັມມະສິດໃນຊັບສິນທຸກທ່ານ ຈະໄດ້ຮັບໃບແຈ້ງເຕືອນເພື່ອບອກຣາຄາຊັບສິນ ໃນເດືອນມີນາຂອງທຸກໆປີ.</td>
<td>ຜູ້ປະເມີນຊັບສິນ ຫຼືອັດຕຣາພາສີ ຈະສົ່ງໃບແຈ້ງເຕືອນເພື່ອບອກຣາຄາຊັບສິນ ໄປໃຫ້ທ່ານທາງໄປສະນີ ໃນທ້າຍເດືອນມີນາຂອງແຕ່ລະປີ, ໃບແຈ້ງເຕືອນດັ່ງກ່າວຈະບອກໃຫ້ທ່ານ ຊາບເຖິງຣາຄາ ແລະປະເພດຊັບສິນຂອງທ່ານ ທີ່ທ່ານຕ້ອງເສັຽພາສີໃນປີຕໍ່ໄປ ແລະຣາຄາຂອງປີກາຍນຳດ້ວຍ</td>
</tr>
<tr>
<td colspan="2">ຂໍແນະນຳໃຫ້ຜູ້ເປັນເຈົ້າຂອງ ຫຼືຜູ້ທີ່ມີກັມມະສິດໃນຊັບສິນທຸກທ່ານ ຈົ່ງພາກັນທົບທວນເບິ່ງໃບແຈ້ງເຕືອນທີ່ບອກຣາຄາຊັບສິນໄວ້ ວ່າທ່ານເຫັນພ້ອມ ຫຼືບໍ່ເຫັນພ້ອມກັບຣາຄາຊັບສິນທີ່ບອກໄວ້ຢູ່ໃນໃບແຈ້ງເຕືອນດັ່ງກ່າວ</td>
</tr>
<tr>
<td rowspan="2">ຖ້າທ່ານບໍ່!ຫັນພ້ອມກັບຂໍ້ຄວາມທີ່ຂຽນໄວ້ ຢູ່ໃນໃບແຈ້ງເຕືອນທີ່ບອກຣາຄາຊັບສິນ …</td>
<td>ກະຣຸນາເລີ່ມໂທຣະສັບໄປຫາຜູ້ປະເມີນຣາຄາຂອງທ່ານໂລດ ເພື່ອປຶກສາຫາລືເຣື້ອງທີ່ທ່ານ ສົນໃຈກັບພວກຂະເຈົ້າ. ເບີໂທຣະສັບມີຢູ່ໃນໃບແຈ້ງເຕືອນທີ່ສົ່ງໄປໃຫ້ທ່ານນັ້ນແລ້ວ. ພວກຂະເຈົ້າຈະໄດ້ຊອກຫາຂໍ້ມູນມາໃຫ້ທ່ານ ກ່ຽວກັບເຣື້ອງທີ່ວ່າ ຣາຄາ ແລະການຈຳແນກປະ ເພດຊັບສິນສຳຫຼັບການປະເມີນຄັ້ງໃໝ່ນີ້ ໄດ້ກຳນົດໄວ້ແນວໃດ ແລະທາງທີ່ທ່ານຈະເລືອກ ມີ ຫຽັງແດ່.<br>ຖ້າທ່ານເຊື່ອວ່າມີການຜິດພາດເກີດຂຶ້ນ ທ່ານຈະຕ້ອງຮ້ອງຂໍໄປຍັງທາງຜູ້ປະ ເມີນຣາຄາເພື່ອໃຫ້ທຳການທົບທວນຄືນເບິ່ງວ່າ ຂໍ້ມູນທັງໝົດທີ່ນຳມາໃຊ້ໃນການປະເມີນຄັ້ງນີ້ຮັບປະກັນໄດ້ວ່າເປັນຂໍ້ມູນທີ່ຖືກຕ້ອງ</td>
</tr>
<tr>
<td>ທາງເລືອກອີກທາງໜຶ່ງກໍ່ຄືທ່ານຈະຕ້ອງໄປຮ່ວມໃນກອງປະຊຸມ ຂອງຄະນະກັມມະການກ່ຽວກັບການອຸທອນ ແລະຄວາມສເມີພາກຂອງເມືອງມິນນີອາໂປລິສ ( Board of Appeal and Equalization) ຫຼືກອງປະຊຸມຣະຫວ່າງເຈົ້າຂອງຊັບສິນ ແລະຜູ້ປະເມີນ ( Open Book<br><br>Meetings) ຊຶ່ງຈັດຂຶ້ນໃນເດືອນມີນາຂອງທຸກໆປີ ທັງນີ້ ເພື່ອຈະໄດ້ອຸທອນ, ສົນທະນາໂຕ້ຕອບ ແລະຮຽນຮູ້ວ່າຣາຄາ ແລະການຈຳແນກປະເພດຊັບສິນນັ້ນ ໄດ້ກຳນົດຂຶ້ນມາແນວໃດສຳຫຼັບການປະເມີນໃນປີຕໍ່ໄປ. ຖ້າທ່ານເຫັນວ່າມີການຜິດພາດເກີດຂຶ້ນ ທ່ານຈະຕ້ອງຊອກຫາເວລາໄປພົບ ເພື່ອທົບທວນຂໍ້ມູນຕ່າງໆ ທີ່ໃຊ້ໃນການປະເມີນ ຣາຄາ.</td>
</tr>
</table>

<table>
<tr><td></td><td>ຖ້າທ່ານບໍ່ເຊື່ອວ່າທ່ານຈະສາມາດຂາຍຊັບສິນຂອງທ່ານໄດ້ ໃນຣາຄາທີ່ຜູ້ປະເມີນຣາຄາໄດ້ປະເມີນມາ ຫົນທາງອີກຫົນທາງໜຶ່ງທີ່ທ່ານເຮັດໄດ້ ກໍ່ຄືການຍື່ນອຸທອນ<br>ຕົວຢ່າງເຊັ່ນ ທ່ານອາດຈະຈ້າງຜູ້ປະເມີນເອກກະຊົນມາ ເພື່ອເຮັດການປະເມີນຣາຄາຊັບສິນຂອງທ່ານໃຫ້ຄົບຖ້ວນ ແລ້ວເອົາໄປຍື່ນໃຫ້ທາງເມືອງ ເພື່ອທົບທວນເບິ່ງຄືນກໍ່ໄດ້.</td></tr>
<tr><td colspan="2">ຂັ້ນຕໍ່ໄປກໍ່ແມ່ນໜ່ວຍງານຂອງຣັຖບານທ້ອງຖິ່ນທີ່ຈະເຮັດງົບປະມານຂອງຕົນຂຶ້ນມາ. ການເຮັດງົບປະມານດັ່ງກ່າວນີ້ ແມ່ນໃຫ້ຣວມເອົາຈຳນວນເງິນທີ່ທາງ ໂຮງຮຽນທ້ອງຖິ່ນ, ເມືອງມິນນິອາໂປລີສ ແລະພາສີພິເສດທ້ອງຖິ່ນອື່ນໆ ເຊັ່ນສະພາຂອງນະຄອນຫຼວງ ຕ້ອງການ ເຂົ້ານຳ,</td></tr>
<tr><td>ກົດໝາຍໄດ້ກຳນົດໃຫ້ຣັຖບານທ້ອງຖິ່ນ ຈັດໃຫ້ມີກອງປະຊຸມແບບເປີດເຜີຍຂື້ນ ພ້ອມກັບໃຫ້ບອກຈຳນວນເງິນ ທີ່ຕ້ອງການເກັບພາສີຊັບສິນເພີ່ມຕື່ມ ທັ້ງນີ້ກໍ່ເພື່ອວາງແຜນໄວ້ລໍຖ້າການອະນຸມັດ ສຳຫຼັບປີຕໍ່ໄປ. ຕາມປົກກະຕິແລ້ວ ການອະພິປາຍດັ່ງກ່າວຈະມີຂື້ນໃນທ້າຍເດືອນສິງຫາ ຫຼືຕົ້ນເດືອນກັນຍາ ຂະນະທີ່ໜ່ວຍງານຂອງຣັຖບານທ້ອງຖິ່ນ ຈຳຕ້ອງໄດ້ອອກສຽງລົງຄະແນນ ແລະກຳນົດການເກັບພາສີເພີ່ມສູງສຸດ ໃນຕອນກາງຂອງເດືອນກັນຍາ.<br>ພາສີທີ່ເກັບນັ້ນລົງທ້າຍແລ້ວ ອາດຈະມີຈຳນວນນ້ອຍກວ່າຈຳນວນທີ່ໄດ້ປະກາດໄປ ແຕ່ຈະບໍ່ສູງເກີນກວ່າຈຳນວນທີ່ໄດ້ປະກາດໄປເປັນເດັດຂາດ.</td><td>ໜ່ວຍງານຂອງຣັຖບານທ້ອງຖິ່ນເຊັ່ນໂຮງຮຽນທ້ອງຖິ່ນ ແລະເມືອງມິນນິອາໂປລີສ ຈະເຮັດງົບປະມານສຳຫຼັບປີຕໍ່ໄປ ໃນຣະດູໃບໄມ້ປົ່ງ ແລະໃນຣະດູຮ້ອນຂອງປີຜ່ານມາ.<br>ຖ້າທ່ານມີຄວາມສົນໃຈໃນເຣື້ອງງົບປະມານຂອງຣັຖບານທ້ອງຖິ່ນ ຫຼືຢາກຊາບວ່າຈະເອົາເງິນພາສີທີ່ເກັບໄປຈາກທ່ານ ໃຊ້ຈ່າຍໄປໃນທຳນອງໃດແລ້ວ  ທ່ານຄວນກວດສອບເບິ່ງວ່າກອງປະຊຸມ ແລະການຮັບຟັງສຽງມະຫາຊົນ ຈະຈັດຂື້ນຢູ່ໃສ ມື້ໃດວັນໃດເວລາໃດ  ແລ້ວຈື່ງຕິດຕໍ່ໄປຫາເຈົ້າໜ້າທີ່ຜູ້ມີໜ້າທີ່ເກັບພາສີຂອງທ່ານ ເພື່ອມີສ່ວນເຂົ້າຮ່ວມນຳໃນເຣື້ອງງົບປະມານ. ອີກປະການໜຶ່ງ ທ່ານອາດຈະເຂົ້າຮ່ວມການປະຊຸມແບບແລກປ່ຽນຄວາມຄິດຄວາມເຫັນ ຫຼືປະສົພການ ຫຼືແບບວາງແຜນກ່ຽວກັບເຣື້ອງງົບປະມານຂອງໜ່ວຍງານຣັຖບານທ້ອງຖິ່ນກໍ່ໄດ້.</td></tr>
<tr><td>ຫຼັງຈາກຣັຖບານທ້ອງຖິ່ນໄດ້ ຈັດໃຫ້ມີການປະຊຸມເພື່ອຮັບຟັງສຽງມະຫາຊົນ ເສັດສິ້ນລົງແລ້ວ ຣັຖບານກໍ່ຈະນຳເອົາຄວາມຕ້ອງການທາງດ້ານງົບປະມານທີ່ຮ່າງໄວ້ ໄປສເນີ ເພື່ອດຳເນີນການໃນຂັ້ນຕໍ່ໄປ.</td><td>ງົບປະມານຂອງໜ່ວຍງານຂອງຣັຖບານທ້ອງຖິ່ນແຕ່ລະໜ່ວຍ ຈະຕ້ອງມີພາກສ່ວນໜຶ່ງຈັດໄວ້ເປັນສ່ວນຂອງການໃຊ້ຈ່າຍໃນການເຮັດທຸຣະກິດ (ຈັດໂປຣແກຣມ ແລະບໍຣິການໃຫ້ຜູ້ຢູ່ ອາສັຍ) ສຳຫຼັບການເກັບພາສີຊັບສິນ. ຫຼືຈຳນວນເງິນທັ້ງໝົດທີ່ອົງກອນຂອງຣັຖບານຕ້ອງການຈາກຜູ້ເສັຽພາສີ ເພື່ອໄປໃຊ້ຈ່າຍໃນກິຈກັມຕ່າງຂອງພວກຂະເຈົ້າໃນປີຕໍ່ໄປ.</td></tr>
<tr><td colspan="2">ຫ້ອງການຝ່າຍປະເມີນພາສີຊັບສິນ ຈະຕ້ອງຕຽມຄິດໄລ່ເຣື້ອງພາສີຊັບສິນທີ່ໄດ້ຄາດກະໄວ້ ຂອງແຕ່ລະຊັບສິນ ທີ່ຢູ່ໃນເມືອງມິນນິອາໂປລີສ ສຳຫຼັບ ປີຕໍ່ໄປ. ເງິນຈຳນວນເຫຼົ່ານີ້ບໍ່ແມ່ນຈະຄິດຂື້ນມາເອົາເອງ ແຕ່ໄດ້ໃຊ້ວິຊາຄຳນວນໃນການຄິດໄລ່ ເສັດຮຽບຮ້ອຍແລ້ວ ກໍ່ມອບໃຫ້ທາງເຄື່ອງຄອມພິວເຕີ ແລະພະນັກງານຜູ້ມີປະສົພການ ທຳການກວດສອບເບິ່ງອີກເທື່ອໜຶ່ງ.</td></tr>
<tr><td>ເມື່ອງົບປະມານຂອງໜ່ວຍງານຂອງຣັຖບານທ້ອງຖິ່ນທີ່ຈະນຳສເນີທຸກໆສະບັບ ໄດ້ຮ່າງເສັດຮຽບຮ້ອຍແລ້ວໃຫ້ເອົາຄຳຖແລງກ່ຽວກັບການຮ່າງສເນີພາສີ ຫຼືໂດຍທົ່ວໄປແລ້ວ ມັກເອີ້ນວ່າ Truth-In–Taxation ໄປພິມ ແລ້ວສົ່ງອອກໄປທາງໄປສະນີ ໄປໃຫ້ຜູ້ທີ່ເປັນເຈົ້າຂອງຊັບສິນ ແຕ່ລະຄົນ ໃນເມືອງ ມິນນິອາໂປລີສ ຫຼັງຈາກວັນທີ່ 10 ພຶສຈິກາໄປແລ້ວ ແຕ່ຕ້ອງກ່ອນວັນທີ່ 25 ພຶສຈິກາ</td><td>ຄຳຖແລງກ່ຽວກັບການຮ່າງສເນີພາສີ ນັ້ນ ບໍ່ແມ່ນຮ່າງກົດໝາຍ ແຕ່ເປັນຄຳແຈ້ງເຕືອນ ວ່າພາສີຊັບສິນຂອງທ່ານຈະປ່ຽນແປງໄປໃນລັກສະນະໃດ ຖ້າຫາກວ່າໜ່ວຍງານພາສີຂອງທ້ອງຖິ່ນທັງໝົດ ໄດ້ຮັບຮອງເອົາການປ່ຽນແປງອັດຕຣາພາສີ ຊຶ່ງໃນປັດຈຸບັນນີ້ ໜ່ວຍງານດັ່ງກ່າວກຳລັງພິຈາຣະນາຢູ່. ຄຳຖແລງດັ່ງກ່າວໄດ້ຈັດເອົາອັດຕຣາພາສີຂອງປີປັດຈຸບັນ ແລະອັດຕຣາພາສີທີ່ຮ່າງສເນີເຂົ້າໄວ້ນຳ ເພື່ອທຳການວິເຄາະ. ນອກຈາກນີ້ແລ້ວ ຄຳຖແລງດັ່ງກ່າວຍັງໄດ້ບອກໃຫ້ຊາບເຖິງວັນເວລາ ແລະສະຖານທີ່ບ່ອນປະຊຸມທີ່ກ່ຽວພັນກັບ ເຣື້ອງ“Truth inTaxation” ໄວ້ນຳອີກ. ກອງປະຊຸມດັ່ງກ່າວນີ້ ທາງຣັຖບານທ້ອງຖິ່ນແຕ່ ລະຣັຖບານໄດ້ທຳການຈັດຂື້ນທຸກໆປີ ອັນເປັນຫົນທາງໜຶ່ງທີ່ປະຊາຊົນຈະໄດ້ວິພາກວິຈານ ແລະອອກຄວາມຄິດຄວາມເຫັນ ກ່ຽວກັບອັດຕຣາພາສີຊັບສິນທີ່ໄດ້ສເນີມາ.<br><br>ຖືວ່າກອງປະຊຸມປະຈຳປີທີ່ກ່ຽວພັນກັບ ເຣື້ອງ “Truth in Taxation” ນີ້ ແມ່ນໂອກາດອັນສຸດທ້າຍຂອງທ່ານ ທີ່ຈະສົ່ງຜົນໄປກະທົບຕໍ່ການຕັດສິນໃຈຂອງເຈົ້າໜ້າທີ່ຂອງຣັຖບານທ້ອງຖິ່ນ ກ່ຽວກັບງົບປະມານທີ່ພວກຂະເຈົ້າໄດ້ສເນີໄປສຳຫຼັບປີໜ້າ ອັນຣວມທັງອັດຕຣາພາສີຊັບສິນ ຊຶ່ງພວກຂະເຈົ້າເຊື່ອວ່າມີຄວາມຈຳເປັນ ເພື່ອນຳໄປໃຫ້ໂຄງການ ແລະການບໍຣິການຕ່າງໆເຂົ້ານຳດ້ວຍ.</td></tr>
</table>

<table>
<tr><td colspan="2">ກັນວິທີຂັ້ນສຸດທ້າຍຂອງງົບປະມານ ເກີດຂື້ນໃນຣະຍະບໍ່ເທົ່າໃດມື້ຈາກວັນທີ່ 20 ເດືອນທັນວາຂອງແຕ່ລະປີ.ຣັຖບານທ້ອງຖິ່ນຈະຕ້ອງຮັບຮອງເອົາງົບປະມານສຸດທ້າຍຂອງຕົນ ສຳຫຼັບປີໜ້າ ໃນເດືອນທັນວາ ແລະຖ່າຍທອດໃຫ້ຊາບເຖິງຣາຍລະອຽດກ່ຽວກັບຄວາມຕ້ອງການທາງດ້ານການເງິນ ຊຶ່ງຈະນຳໄປໃຊ້ໃນການກະຕຽມຄິດໄລ່ພາສີຊັບສິນຂັ້ນສຸດທ້າຍ.</td></tr>
<tr><td>ຄຳຖແລງກ່ຽວກັບພາສີຊັບສິນສະບັບ "ປັດຈຸບັນ" – ບໍ່ແມ່ນສະບັບ"ຮ່າງສເນີ" ອີກຕໍ່ໄປ – ຈະຖືກສົ່ງອອກໄປຫາເຈົ້າຂອງຊັບສິນ ທາງໄປສະນີ ໃນທ້າຍເດືອນມີນາ ສຳຫຼັບພາສີຊັບສິນ ທີ່ຈະຕ້ອງຊຳຣະໃນປີນັ້ນ.</td><td>ໝາຍເຫດ: ຄຳຖແລງສຳຫຼັບຊັບສິນກ່ຽວກັບເຮືອນທີ່ຜລິດໂດຍໂຮງງານ ຈະສົ່ງໄປທາງໄປ ສະນີໃນເດືອນພຶສພາ.</td></tr>
<tr><td>ແຕ່ລະປີ ເຈົ້າຂອງຊັບສິນເກືອບໝົດທຸກຄົນຈະຕ້ອງຊຳຣະພາສີຊັບສິນສອງເທື່ອ, ເທື່ອຕຳອິດໃກ້ໆວັນທີ່ 15 ເດືອນພຶສພາ, ເທື່ອທີ່ສອງໃກ້ໆວັນທີ່ 15 ເດືອນຕຸລາ.</td><td>ວິທີທີ່ຈະຊຳຣະພາສີຊັບສິນ ສຳຫຼັບຜູ້ທີ່ອາສັຍຢູ່ໃນເຄົາຕີແຮັນເນີປິນ ມີຫຼາຍວິທີ ກະຣຸນາໃຊ້ ຈຸດເຊື່ອມຕໍ່ຈຸດນີ້ http://www.co.hennepin.mn.us/xxxx ເພື່ອຮຽນຮູ້ກ່ຽວກັບທາງ ເລືອກດັ່ງກ່າວ ວັນເດືອນປີທີ່ຈະຊຳຣະພາສີອື່ນໆ: ໃຫ້ກວດເຊັກເບິ່ງຢູ່ໃນຄຳຖແລງກ່ຽວກັບພາສີຊັບສິນວ່າ ວັນໃດແມ່ນວັນຄົບກຳນົດທີ່ຈະຊຳຣະພາສີ. ວັນດັ່ງກ່າວຈະບອກໄວ້ຢູ່ໃນຄຳຖແລງກ່ຽວກັບ ພາສີຊັບສິນນັ້ນເອງ. ການຊຳຣະພາສີເທື່ອທີ່ສອງຂອງຊັບສິນທາງດ້ານກະເສດກັມ ແມ່ນ ໃກ້ໆກັບວັນທີ່ 15 ພຶສຈິກາ ສ່ວນກຳນົດການຊຳຣະພາສີຊັບສິນຂອງເຮືອນທີ່ຜລິດໂດຍໂຮງ ງານຕາມທັມມະດາແລ້ວ ແມ່ນໃກ້ໆກັບວັນທີ່ 31 ຂອງເດືອນສິງຫາ ແລະວັນທີ່ 15 ຂອງເດືອນພຶສຈິກາ.</td></tr>
<tr><td colspan="2">ເວັບໄຊຂອງເຄົາຕີແຮັນເນີປິນໄດ້ຈັດຫາຂໍ້ມູນກ່ຽວກັບຣາຄາ.ລັກສະນະ ແລະພາສີຊັບສິນ ໄວ້ຢ່າງຫຼວງຫຼາຍ ເຊັ່ນດຽວກັນ.ຈຸດເຊື່ອມຕໍ່ທີ່ກ່າວໄວ້ໃນບົດຂຽນຂ້າງເທິງນີ້ ຈະພາທ່ານກົງໄປຫາວັກຕອນຂອງບົດຂຽນດັ່ງກ່າວໄດ້ຢ່າງຖືກຕ້ອງ. ທ່ານຈະພົບເວັບໄຊຂອງເຄົາຕີແຮັນເນີປິນໄດ້ທີ່ http://www.co.hennepin.mn.us/</td></tr>
</table>

# ການອຸທອນການປະເມີນຊັບສິນຂອງທ່ານ

## ທາງເລືອກຂອງຂ້າພະເຈົ້າມີຫຍັງແດ່ ຖ້າຫາກວ່າບໍ່ເຫັນນຳການປະເມີນພາສີຊັບສິນຂອງຂ້າພະເຈົ້າ?

ເມື່ອທ່ານໄດ້ທຳການທົບທວນເບິ່ງໃບແຈ້ງເຕືອນ ຊຶ່ງທ່ານໄດ້ຮັບທຸກໆປີໃນເດືອນມີນາ ແລະຖ້າທ່ານບໍ່ເຫັນພ້ອມກັບການປະເມີນຣາຄາ ຫຼື ການຈຳແນກປະເພດຊັບສິນແລ້ວ ທ່ານກໍ່ຍັງມີຫຼາຍວິທີທີ່ເປີດໂອກາດໃຫ້ທ່ານທຳການອຸທອນໄດ້ຢູ່. ວິທີທີ່ທ່ານຈະອຸທອນນັ້ນ ສຣຸບແລ້ວມີດັ່ງຕໍ່ລົງນີ້:

ປຶກສາຫາລືເຣື້ອງ ທີ່ທ່ານວິຕົກຫ່ວງໃຍນຳເຈົ້າໜ້າທີ່ຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ

- ທົບທວນເບິ່ງວິທີ ແລະການຄຳນວນ ທີ່ໃຊ້ໃນການກຳນົດຣາຄາຊັບສິນຂອງທ່ານ
- ທົບທວນເບິ່ງລັກສະນະພິເສດຂອງຊັບສິນຂອງທ່ານ ແລະທຸກໆການປ່ຽນແປງ ໃນປີທີ່ຜ່ານມາ
- ທົບທວນເບິ່ງການຂາຍໃນເຂດພື້ນທີ່ຂອງທ່ານ ແລະຄວາມໂນ້ມອຽງຂອງຕລາດທ້ອງຖິ່ນ
- ປຶກສາຫາລືກ່ຽວກັບທາງເລືອກ ແລະຂັ້ນຕໍ່ໄປກັບເຈົ້າໜ້າທີ່ຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ
- ຖ້າທ່ານ ແລະເຈົ້າໜ້າທີ່ຫ້ອງການຝ່າຍປະເມີນພາສີຊັບສິນຍັງຕົກລົງກັນບໍ່ໄດ້ ທາງເລືອກຂອງທ່ານທີ່ຈະດຳເນີນການອຸທອນຕໍ່ໄປມີຄືດັ່ງນີ້

*ອຸທອນໂດຍກົງໄປຫາສານພາສີ*

*ສາມຣະດັບໃນການທົບທວນເພື່ອຕົກລົງປອງດອງກັນກ່ຽວກັບການອຸທອນ*

ອຸທອນໄປຍັງຄະນະກັມມະການກ່ຽວກັບການອຸທອນ ແລະຄວາມສເມີພາບຂອງເມືອງມິນນີອາໂປລີສ

- ຄະນະກັມມະການດັ່ງກ່າວຈະປະຊຸມກັນໃນເດືອນເມສາ ຫຼືພຶສພາ. ກະຣຸນາໂທຣະສັບໄປຍັງຫ້ອງການເລຂາທິການປະຈຳເມືອງມິນນີອາໂປລີສ ເພື່ອຂໍຄຳຮ້ອງ ແລະນັດພົບ
- ຖ້າທ່ານ ຍັງຄິດວ່າຄວາມຕົກຫ່ວງໃຍຂອງຍັງບໍ່ຖືກຕອບສນອງ ຂັ້ນຕໍ່ໄປທ່ານອາດຈະຍື່ນອຸທອນໄປຍັງຄະນະກັມມະການກ່ຽວກັບການອຸທອນ ແລະຄວາມສເມີພາກຂອງຂອງເຄົາຕີແຮັນເນີປິນ

ອຸທອນໄປຍັງຄະນະກັມມະ ການກ່ຽວກັບການອຸທອນ ແລະຄວາມສເມີພາກຂອງຂອງເຄົາຕີແຮັນເນີປິນ

- ກ່ອນອື່ນທ່ານຈະຕ້ອງຍື່ນອຸທອນໄປຍັງຄະນະກັມມະການກ່ຽວກັບການອຸທອນຂອງເມືອງມິນນີອາໂປລີສເສັຽກ່ອນ
- ຄະນະກັມມະການດັ່ງກ່າວຈະປະຊຸມກັນໃນເດືອນມິຖຸນາ ກະຣຸນາໂທຣະສັບໄປຍັງໜ່ວຍບໍຣິການຜູ້ຈ່າຍພາສີຂອງເຄົາຕີແຮັນເນີປິນ ເພື່ອຂໍຄຳຮ້ອງແລະນັດພົບ
- ຍື່ນຄຳອຸທອນດ້ວຍຕົນເອງ ດ້ວຍຈົດໝາຍ ຫຼືຕົວແທນທີ່ຖືກແຕ່ງຕັ້ງ
- ຖ້າທ່ານຍັງຄິດວ່າຄວາມຫ່ວງໃຍຂອງຍັງບໍ່ຖືກຕອບສນອງນັ້ນ ຂັ້ນຕໍ່ໄປທ່ານອາດຈະຍື່ນອຸທອນໄປຍັງສານພາສີຣັດມິນນີໂຊຕາ

ອຸທອນໄປຍັງສານພາສີຣັດມິນນີໂຊຕາ

- ການອຸທອນອາດຈະຍື່ນໄດ້ຈົນຮອດວັນທີ່ 30 ເດືອນເມສາ ຂອງປີ ເມື່ອມີການຊຳຣະພາສີ
- ທ່ານຈະທຳການຕິດຕໍ່ກັບສມຽນຂອງສານພາສີໄດ້ໂດຍໂທຣະສັບໄປຍັງໝາຍເລກ 651-296-2806 ພວກສມຽນດັ່ງກ່າວຈະສົ່ງທໍ່ທີ່ບັນຈຸຣາຍລະອຽດກ່ຽວກັບສານພາສີ ແລະແບບຟອມທີ່ຈຳເປັນສຳຫຼັບການຍື່ນຄຳຮ້ອງທ່ານຈະຕ້ອງຈ່າຍຄ່າທັມນຽມ ໃນການຍື່ນຄຳຮ້ອງດັ່ງກ່າວ
- ບໍ່ຈຳເປັນຈະຕ້ອງມີທະນາຍຄວາມກໍ່ໄດ້ ແຕ່ທ່ານຄວນປະເມີນສະຖານະການເບິ່ງກ່ອນວ່າຈະຕັດສິນໃຈແນວໃດ

ກອງຮັບຄຳອຸທອນແບບປົກກະຕິ

- ໃຊ້ກັບຊັບສິນທຸກປະເພດ
- ຣາຄາປະເມີນຊັບສິນຈະຕ້ອງເກີນກວ່າ $300000,00 ຂຶ້ນໄປ
- ແນະນຳໃຫ້ມີທະນາຍຄວາມ
- ອາດຈະອຸທອນຄຳຕັດສິນຂຶ້ນໄປຫາສານສູງສຸດໄດ້

ກອງຮັບຄຳອຸທອນແບບຣາຍຍ່ອຍ

- ທຸກໆຊັບສິນກ່ຽວກັບເຄຫະສະຖານໂດຍມີເງື່ອນໄຂວ່າບ່ອນຢູ່ອາສັຍໜຶ່ງໜ່ວຍຕໍ່ດິນຕອນໜຶ່ງ ຕໍ່ຄຳຮ້ອງເທື່ອໜຶ່ງ
- ຣາຄາຊັບສິນທີ່ບໍ່ກ່ຽວກັບເຄຫະສະຖານ ຈະຕ້ອງຕ່ຳກວ່າ $300000,00ລົງມາ
- ບໍ່ຈຳເປັນຈະຕ້ອງມີທະນາຍຄວາມ
- ຄຳຕັດສິນແມ່ນສຸດທ້າຍ

# ການເຮັດໃຫ້ຊັບສິນເປັນປະເພດເຄຫະສະຖານ

## ເປັນຫຍັງປະຊາຊົນຈຶ່ງຍື່ນຄໍາຮ້ອງຂໍແຍກເປັນປະເພດເຄຫະສະຖານ?

ການຈໍາແນກຊັບສິນເປັນປະເພດເຄຫະສະຖານ ແມ່ນໂຄງການຫຼຸດຜ່ອນພາສີຊັບສິນທີ່ເປີດກວ້າງໃຫ້ຜູ້ທີ່ອາສັຍຢູ່ໃນຣັດມິນນີໂຊຕາ. ຣັດມິນນີໂຊຕາຕ້ອງການຊຸກຍູ້ສົ່ງເສີມຜູ້ທີ່ມີກັມມະສິດໃນເຮືອນ ໂດຍຈັດໃຫ້ມີການຫລຸດຜ່ອນພາສີຊັບສິນ ແກ່ຊັບສິນທີ່ມີຜູ້ຄອບຄອງເປັນຜູ້ຢູ່ອາສັຍ ຕົວຢ່າງເຊັ່ນການຈໍາແນກຊັບສິນເປັນແບບເຄຫະສະຖານ ສາມາດ ຫລຸດພາສີໃຫ້ແກ່ຊັບສິນປະເພດບ່ອນພັກອາສັຍ ໄດ້ເຖິງ $304 ຕໍ່ປີ

## ຄໍາວ່າການຄອບຄອງແມ່ນໝາຍຄວາມເຖິງຫຍັງ?

ທ່ານຈະຕ້ອງມີໃບຕາດິນທີ່ຖືກຕ້ອງ ຫຼືໃບສັນຍາກ່ຽວກັບຕາດິນທີ່ອະນຸມັດໃຫ້ທ່ານມີກັມມະສິດໃນຊັບສິນ ອັນຖືວ່າເປັນຫຼັກຖານຂອງການຄອບຄອງຊັບສິນ. ເພື່ອເປັນການຮັບຮອງວ່າໃບຕາດິນນັ້ນ ເປັນໃບຕາດິນທີ່ຖືກຕ້ອງແທ້ ທ່ານຈະຕ້ອງນໍາໃບຕາດິນດັ່ງກ່າວໄປຂຶ້ນທະບຽນໄວ້ກັບນາຍທະບຽນຕາດິນຂອງເຄົາຕີແຮັນເນີປິນ.

## ໃຜເປັນຜູ້ໄດ້ຮັບຜົນປໂຍດດັ່ງກ່າວນີ້?

ຖ້າທ່ານເປັນເຈົ້າຂອງອະສັງຫະຣິມຊັບເອງ ແລະທ່ານ ຫຼືຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນ ໄດ້ເຂົ້າໄປຢູ່ອາສັຍຊັບສິນດັ່ງກ່າວ ພາຍໃນວັນທີ່ 1 ເດືອນທັນວາ ທ່ານອາດຈະຍື່ນຄໍາຮ້ອງຂໍສະຖານະເປັນປະເພດເຄຫະສະຖານໄດ້.

## ຄໍາວ່າ ການເຂົ້າໄປຢູ່ອາສັຍ ແມ່ນໝາຍຄວາມເຖິງຫຍັງ?

ທ່ານ ແລະຜູ້ທີ່ເປັນເຈົ້າຂອງອື່ນໆທັງໝົດ ຈະຕ້ອງໃຊ້ຊັບສິນຂອງຕົນ ເປັນບ່ອນຢູ່ອາສັຍຫຼັກຂອງຕົນແທ້ ຫຼືເວົ້າອີກແບບໜຶ່ງກໍ່ຄືວ່າ ທ່ານຈະຕ້ອງຢູ່ອາສັຍໃນນັ້ນ. ການເຂົ້າໄປຢູ່ອາສັຍຊົ່ວຄາວ ຫຼືພໍແຕ່ເປັນພິທີ ຈະບໍ່ຖືວ່າເປັນການພຽງພໍເພື່ອຮັບການປະຕິບັດດຸດັ່ງກັບວ່າເປັນປະເພດເຄຫະສະຖານ. ຖ້າຜູ້ເປັນເຈົ້າຂອງຊັບສິນມີຫຼາຍກວ່າໜຶ່ງຄົນ ແລະຄົນໃດຄົນໜຶ່ງໃນຈໍານວນນັ້ນ ບໍ່ໄດ້ຢູ່ອາສັຍຢູ່ໃນຊັບສິນດັ່ງກ່າວ  ຊັບສິນດັ່ງກ່າວນັ້ນອາດໄດ້ຮັບເປັນເສດສ່ວນ ຫຼືບາງສ່ວນຈາກການຈໍາແນກປະເພດເຄຫະສະຖານກໍ່ໄດ້.

## ເວລາໃດຂ້າພະເຈົ້າຈຶ່ງຈະຍື່ນຄໍາຮ້ອງຂໍໄດ້?

ທ່ານຄວນຍື່ນຄໍາຮ້ອງຂອງທ່ານໄວທີ່ສຸດເທົ່າທີ່ຈະໄວໄດ້ ຫຼັງຈາກໄດ້ຂາຍເຮືອນແລະຍ້າຍເຂົ້າໄປຢູ່ເຮືອນຂອງທ່ານແລ້ວ. ຖ້າທ່ານຊື້ເຮືອນແລະເຂົ້າໄປຢູ່ອາສັຍໃນຊັບສິນປະເພດທີ່ບໍ່ເປັນເຄຫະສະຖານ ກ່ອນວັນທີ່ 1 ເດືອນທັນວາ ແລ້ວຍື່ນຄໍາຮ້ອງຂໍໄປເພື່ອໃຫ້ປະຕິບັດດຸດັ່ງກັບວ່າເປັນປະເພດເຄຫະສະຖານ ກ່ອນວັນ ທີ່ 15 ເດືອນທັນວາ. ພາສີປະເພດເຄຫະສະຖານຈະເຣີ່ມເກັບໃນປີຕໍ່ໄປ.ເມື່ອການເກັບພາສີປະເພດທີ່ເປັນເຄຫະສະຖານຖືກຮັບຮອງເອົາແລ້ວ ການເກັບພາສີປະເພດດັ່ງກ່າວ ກໍ່ຈະຄົງຢູ່ເຊັ່ນນັ້ນຕລອດໄປ ຈົນກວ່າກັມມະສິດໃນການຄອບຄອງຊັບສິນດັ່ງກ່າວ ຫຼື ການເຂົ້າໄປຢູ່ອາສັຍ   ຖືກປ່ຽນໄປ ຫຼືຊັບສິນດັ່ງກ່າວຖືກຂາຍໄປ.

## ຖ້າຂ້າພະເຈົ້າຂາຍຊັບສິນຂອງຂ້າພະເຈົ້າແລ້ວ ຈະເປັນແນວໃດ?

ຈະເປັນເວລາໃດກໍ່ຕາມ ຖ້າຊັບສິນຂອງທ່ານຖືກຂາຍໄປ ຫຼືທ່ານໄດ້ປ່ຽນບ່ອນຢູ່ອາສັຍຫຼັກແລ້ວ ຕາມກົດໝາຍຂອງຣັດ ທ່ານຈະຕ້ອງແຈ້ງໃຫ້ຜູ້ປະເມີນຊັບສິນ ຫຼືອັດຕຣາພາສີຂອງເມືອງຊາບ ພາຍໃນ 30 ວັນ. ຖ້າທ່ານບໍ່ສາມາດແຈ້ງໄດ້ ພາຍໃນ 30 ວັນ ທ່ານຈະຕ້ອງຈ່າຍຄ່າພາສີ ຕາມທີ່ໄດ້ກໍານົດໄວ້ ໂດຍອີງໃສ່ປະເພດທີ່ຖືກຕ້ອງຂອງຊັບສິນດັ່ງກ່າວ ແລະຈ່າຍຄ່າປັບໃໝນໍາດ້ວຍ.

ແບບຟອມຂອງການແຈ້ງຍ້າຍ ຫຼືລົບລ້າງການຂໍແຍກເປັນປະເພດເຄຫະສະຖານ

## ຍາດພີ່ນ້ອງຈະເຮັດໃຫ້ຊັບສິນເປັນປະເພດເຄຫະສະຖານໃຫ້ຂ້າພະເຈົ້າໄດ້ບໍ່?

ໄດ້. ຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນ ອາດຈະກາຍມາເປັນຜູ້ເຂົ້າໄປຢູ່ແທນເຈົ້າຂອງຊັບສິນໄດ້. ຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນນັ້ນ ໃຫ້ໝາຍເຖິງຍາດພີ່ນ້ອງໂດຍການເກີດ, ໂດຍການຮັບເອົາມາເປັນລູກບຸນທັມໂດຍຊອບດ້ວຍກົດໝາຍ ຫຼືໂດຍການແຕ່ງດອງ. ຄໍານິຍາມຂອງຄໍາທີ່ວ່າ "ຍາດພີ່ນ້ອງຂອງເຈົ້າຂອງຊັບສິນ"  ໃຫ້ຮວມເຖິງລູກ, ລູກລ້ຽງ, ລູກໄພ້, ລູກເຂີຍ, ພໍ່ແມ່, ພໍ່ນ້າແມ່ນ້າ, ພໍ່ເຖົ້າແມ່ເຖົ້າ ຫຼືປູ່ຍ່າ, ຫຼານຍິງຫຼານຊາຍ, ພໍ່ ຫຼືແມ່ຂອງປູ່ຍ່າ ຫຼື ພໍ່ ຫຼືແມ່ຂອງພໍ່ເຖົ້າແມ່ເຖົ້າ, ອ້າຍ, ອ້າຍເຂີຍ, ເອື້ອຍ, ເອື້ອຍໄພ້, ປ້າ, ລຸງ,  ຫຼານຊາຍ ຫຼືຫຼານສາວ, ສະມາຊິກຂອງຄອບຄົວບໍຣິສັດ ຫຼືຮຸ້ນສ່ວນໃນການເຮັດໄຮ່ນາຮົ້ວສວນ.

ຂໍ້ຈໍາກັດ:

1. ຜົນປໂຍດຂອງພາສີເຄຫະສະຖານ ສໍາຫຼັບຊັບສິນຊຶ່ງຍາດພີ່ນ້ອງໄດ້ເຂົ້າໄປອາສັຍຢູ່ ຈະຕ້ອງບໍ່ເກີນຜົນປໂຍດທີ່ທາງເຈົ້າຂອງຊັບສິນໄດ້ຮັບມາ ໃນຖານະຜູ້ເຂົ້າໄປອາສັຍຢູ່
2. ຍາດພີ່ນ້ອງຈະຕ້ອງຢູ່ອາສັຍໃນຊັບສິນ ຊຶ່ງປັດຈຸບັນນີ້ໄດ້ຈັດເປັນແບບພັກຜ່ອນຕາມຣະດູການ ເປັນເວລາ 4 ປີ ກ່ອນທີ່ຊັບສິນດັ່ງກ່າວຈະຈັດເຂົ້າຢູ່ໃນປະເພດເຄຫະສະຖານໄດ້
3. ບໍ່ວ່າຈະເປັນເຈົ້າຂອງ ຫຼື ຍາດພີ່ນ້ອງທີ່ອາສັຍຢູ່ ບໍ່ມີສິດຈະຮຽກຮ້ອງເອົາເງິນພາສີຊັບສິນປະເພດເຄຫະສະຖານຄືນ ນອກເສັຽຈາກວ່າຍາດພີ່ນ້ອງທີ່ອາສັຍຢູ່ຜູ້ນັ້ນ ຈະເປັນເຈົ້າຂອງສ່ວນໜຶ່ງຂອງຊັບສິນດັ່ງກ່າວ..

## ຈະມີຫຍັງເກີດຂຶ້ນ ຖ້າຂ້າພະເຈົ້າບໍ່ປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທີ່ເປັນປະເພດເຄຫະສະຖານ ຫຼືຂ້າພະເຈົ້າຍື່ນຄໍາຮ້ອງອັນເປັນເທັດກ່ຽວກັບຊັບສິນທີ່ເປັນປະເພດເຄ ຫະສະຖານ?

ການກ່າວເທັດກ່ຽວກັບເລື້ອງຊັບສິນທີ່ເປັນປະເພດເຄຫະສະຖານມີໂທດຈໍາຄຸກບໍ່ເກີນໜຶ່ງປີ ຫຼືປັບໃໝບໍ່ເກີນ $3000 ຫຼືທັງຈໍາຄຸກທັງປັບໃໝ.
ຖ້າຜູ້ປະເມີນຊັບສິນ ຫຼືອັດຕຣາພາສີ ບໍ່ໄດ້ຮັບແຈ້ງ ພາຍໃນ 30 ວັນ ວ່າ ຊັບສິນນັ້ນ ໄດ້ຂາຍໄປ ແລະບໍ່ໄດ້ໃຊ້ເປັນບ່ອນຢູ່ອາສັຍຫຼັກແລ້ວ ສະຖານະຂອງຊັບສິນທີ່ເປັນປະເພດເຄຫະສະຖານ ກໍ່ຈະຖືກ ຖອດອອກໄປ ແລະການປັບໃໝກໍ່ຈະຖືກນໍາມາໃຊ້ ບັງຄັບ.

## ຂ້າພະເຈົ້າຈະເຮັດແນວໃດຖ້າຂ້າພະເຈົ້າຈະຍື່ນຄໍາຮ້ອງຂໍຈໍາແນກຊັບສິນເປັນປະເພດເຄຫະ ສະຖານ?

ເຈົ້າຂອງເຮືອນໃໝ່ໃນເມືອງມິນນິອາໂປລີສ ອາດຈະຍື່ນຄໍາຮ້ອງຂໍຈໍາແນກຊັບສິນເປັນປະເພດເຄຫະສະຖານໄດ້ ໂດຍທາງໄປສະນີ, ທາງແຟັກ ຫຼືດ້ວຍຕົນເອງ ຫຼັງຈາກພວກຂະເຈົ້າໄດ້ຍ້າຍເຂົ້າໄປຢູ່ເຮືອນໃໝ່ແລ້ວ. ກະຣຸນາແຈ້ງໃຫ້ຫ້ອງການຂອງຜູ້ປະເມີນຊັບສິນ ຫຼືອັດຕຣາພາສີຂອງເມືອງຊາບວ່າ ທ່ານຄືເຈົ້າຂອງຊັບສິນ ແລະທ່ານ ຫຼືຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນ ໄດ້ເຂົ້າໄປຢູ່ອາສັຍຊັບສິນດັ່ງກ່າວນັ້ນແລ້ວ. ນອກຈາກນີ້ໃຫ້ຈັດສົ່ງເອກກະສານຕ່າງໆໄປໃຫ້ທາງຫ້ອງການດັ່ງກ່າວ ເພື່ອສນັບສນຸນຂໍ້ຮຽກຮ້ອງຂອງທ່ານ. ທ່ານອາດຈະຍື່ນຄໍາຮ້ອງ ໂດຍທາງໄປສະນີ, ທາງແຟັກ ຫຼືດ້ວຍຕົນເອງກໍ່ໄດ້.

ຮ້ອງຂໍຈໍາແນກຊັບສິນເປັນປະເພດເຄຫະສະຖານ ດ້ວຍຕົນເອງ, ທາງໄປສະນີ ຫຼືທາງແຟັກະ
ບ່ອນທີ່ຈະສົ່ງທາງໄປສະນີ:

City of Lakes Building
309 2nd Av S Room 100
Minneapolis, MN 55401-2234

ຫຼືທາງແຟັກ: (612) 673-3538

ໃນຖານະທີ່ທ່ານເປັນເຈົ້າຂອງຊັບສິນ ທ່ານຈະຕ້ອງຈັດສົ່ງສໍາເນົາຂອງສິ່ງຕ່າງໆດັ່ງຕໍ່ລົງໄປນີ້:

- ໃບຕາດິນທີ່ຮັບຮອງແລ້ວ, ສັນຍາສໍາຫຼັບໃບຕາດິນ ໃບສະແດງກັມມະສິດທີ່ດິນແບບທໍເຣັນສ ແລະອື່ນໆ ເພື່ອເປັນຫຼັກຖານຢັ້ງຢືນເຖິງກັມມະສິດໃນຊັບສິນ
- ສໍາເນົາໃບຮັບຮອງຣາຄາຂອງອະສັງຫາຣິມຊັບ(CRV) ອັນເປັນຫຼັກຖານຢັ້ງຢືນວ່າເອກກະສານເຫຼົ່ານີ້ໄດ້ຍື່ນໄວ້ກັບນາຍທະບຽນຕາດິນຮຽບຮ້ອຍແລ້ວ
- ເລກບັດສວັດດີການສັງຄົມຂອງເຈົ້າຂອງຊັບສິນທຸກໆຄົນ ຫຼືເລກປະຈໍາຕົວຂອງຜູ້ເສັຽພາສີສະເພາະບຸກຄົນຂອງແຕ່ລະຄົນ (ITIN) ຫຼືຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນ ຕາມທີ່ກົດໝາຍຂອງຣັດໄດ້ບັນຍັດໄວ້
- ວັນທີ່ກໍານົດໄວ້ສໍາຫຼັບຊັບສິນປະເພດເຄຫະສະຖານນັ້ນ ຈະຕ້ອງແມ່ນວັນແທ້ໆວັນທີ່ຜູ້ຢູ່ອາສັຍໄດ້ຍ້າຍເຂົ້າໄປຢູ່ໃນຊັບສິນດັ່ງກ່າວ
- ເບີໂທຣະສັບຍາມກາງເວັນ ຫຼືຣາຍລະອຽດສໍາຫຼັບຕິດຕໍ່ ໃນກໍຣະນີທີ່ພວກເຮົາຕ້ອງການຖາມ ໃນຣະຫວ່າງພິຈາຣະນາຄໍາຮ້ອງຂອງທ່ານຢູ່.

ຖ້າທ່ານຫາກເປັນຍາດພີ່ນ້ອງທີ່ມີຄຸນສົມບັດຄົບຖ້ວນເປັນຜູ້ຍື່ນຄໍາຮ້ອງຂໍເຮັດຊັບສິນໃຫ້ເປັນປະເພດເຄຫະສະຖານ ນອກຈາກທ່ານຈະສົ່ງສິ່ງຕ່າງໆທີ່ກ່າວມາແລ້ວຂ້າງເທິງນີ້ໄປໃຫ້ແລ້ວ ທ່ານຍັງຈະຕ້ອງສົ່ງແບບຟອມຄໍາຮ້ອງຂອງຍາດພີ່ນ້ອງ ແລະ ເອກກະສານເພີ່ມຕື່ມໄປພ້ອມດັ່ງນີ້:

- ສໍາເນົາໃບຢັ້ງຢືນການເກີດເພື່ອສະແດງໃຫ້ເຫັນເຖິງຄວາມສັມພັນຣະຫວ່າງຜູ້ທີ່ເຂົ້າໄປຢູ່ອາສັຍກັບເຈົ້າຂອງຊັບສິນ, ໃບແຕ່ງດອງ, ເອກກະສານກ່ຽວກັບການຮັບເປັນບຸດບຸນທັມ, ຄໍາສັ່ງສານ, ຫຼືເອກກະສານອື່ນໆ ຊຶ່ງສະແດງໃຫ້ເຫັນເຖິງຄວາມສັມພັນຣະຫວ່າງຍາດພີ່ນ້ອງຜູ້ທີ່ເຂົ້າໄປຢູ່ອາສັຍ ກັບເຈົ້າຂອງຊັບສິນ.
- ໃບຂັບຂີ່ຣົດຍົນທີ່ຍັງໃຊ້ໄດ້ຢູ່ ຫຼືບັດປະຈໍາຕົວຣັດຂອງຍາດພີ່ນ້ອງຜູ້ທີ່ເຂົ້າໄປຢູ່ອາສັຍ ຊຶ່ງໃນໃບຂັບຂີ່ ຫຼືບັດປະຈໍາຕົວດັ່ງກ່າວ ມີຂຽນບ່ອນຢູ່ຂອງຊັບສິນປະເພດເຄຫະສະຖານໃສ່
- ເມື່ອມີການຮ້ອງຂໍ ອາດຈະສົ່ງເອກກະສານອື່ນໆໄປໃຫ້ອີກ ຖ້າເຫັນວ່າມີຄວາມຈໍາເປັນ

ຫຼັງຈາກກະຊວງໄດ້ຮັບເອກກະສານທີ່ຕ້ອງການ ສໍາຫຼັບພິຈາຣະນາເລື້ອງຊັບສິນປະເພດເຄຫະສະຖານແລ້ວ ທາງກະຊວງກໍ່ຈະເຮັດໃບຄໍາຮ້ອງຂຶ້ນ ແລ້ວສົ່ງໄປໃຫ້ທ່ານທາງໄປສະນີ . ເມື່ອໄດ້ຮັບແລ້ວ ກະຣຸນາກວດກາໃຫ້ມັນລັກແນ່ວ່າຂໍ້ມູນທັງໝົດທີ່ຢູ່ໃນໃບຄໍາຮ້ອງນັ້ນຖືກຕ້ອງ ຫຼືບໍ່ ເມື່ອເຫັນວ່າຖືກຕ້ອງແລ້ວ ເຈົ້າຂອງ ແລະຜູ້ຢູ່ອາສັຍແຕ່ລະຄົນ ຈຶ່ງພາກັນເຊັນຊື່ ແລ້ວສົ່ງໃບຄໍາຮ້ອງທີ່ເຊັນແລ້ວນັ້ນ ຄືນໄປຫາຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງ ກ່ອນວັນທີ່ 15 ເດືອນທັນວາ ຂອງປີແຫ່ງການປະເມີນ.

ການບໍ່ຍອມເຊັນ ແລະການບໍ່ສົ່ງໃບຄໍາຮ້ອງຄືນໄປ ກ່ອນວັນທີ່ 15 ເດືອນທັນວາ ອາດມີຜົນເຮັດໃຫ້ຊັບສິນດັ່ງກ່າວ ຖືກຈໍາແນກໄປເປັນຊັບສິນປະເພດບໍ່ ແມ່ນເຄຫະສະຖານກໍ່ໄດ້.

## ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງເອົາເລກບັດສວັດດີການສັງຄົມຂອງຂ້າພະເຈົ້າໃຫ້?

ເຖິງແມ່ນວ່າຂໍ້ມູນກ່ຽວກັບເລກບັດສວັດດີການສັງຄົມ ຈະເປັນຂໍ້ມູນທາງສ່ວນຕົວກໍ່ຕາມ ແຕ່ພາຍໃຕ້ກົດໝາຍຂອງຣັດມິນນີໂຊຕາແລ້ວ ທ່ານຈະຕ້ອງເອົາເລກບັດສວັດດີການສັງຄົມໃຫ້ເສັຽກ່ອນ ກ່ອນຈະໄດ້ຮັບເຄຣດິດກ່ຽວກັບເລື້ອງຊັບສິນປະເພດເຄຫະສະຖານ. ເລກບັດສວັດດີການສັງຄົມດັ່ງກ່າວຈະນໍາໄປເພື່ອໃຊ້ໃນການຕັດສິນວ່າເຈົ້າຂອງຊັບສິນ ຫຼືຍາດພີ່ນ້ອງຂອງພວກຂະເຈົ້າໄດ້ຍື່ນຄໍາຮ້ອງຂໍເຮັດຊັບສິນໃຫ້ ເປັນປະເພດເຄຫະສະຖານ ຫຼາຍກວ່າໜຶ່ງເທື່ອ ຫຼືບໍ່

## ຂ້າພະເຈົ້າເປັນເຈົ້າຂອງຕຶກອາພາດເມັນ ຂ້າພະເຈົ້າຈະເຮັດຕຶກອາພາດເມັນໃຫ້ເປັນປະເພດເຄຫະສະຖານໄດ້ ຫຼືບໍ່?

ຕາມປົກກະຕິແລ້ວຕຶກອາພາດເມັນທີ່ມີສີ່ຢູນິດ ຫຼືຫຼາຍກວ່າ ແລະຊັບສິນປະເພດອື່ນ ຈະຖືກຈຳກັດບໍ່ໃຫ້ຮັບການປະຕິບັດແບບເຄຫະສະຖານ ໃນເຮື່ອງເປີເຊັນຂອງການເຂົ້າໄປຢູ່ອາສັຍໃນຕຶກຂອງຜູ້ເປັນເຈົ້າຂອງ ໂດຍສະເພາະ.

## ເຮືອນທີ່ຜລິດໂດຍໂຮງງານ ຈະໄດ້ຮັບການຍົກເວັ້ນໃຫ້ເປັນປະເພດເຄຫະສະຖານໄດ້ຫຼື ບໍ່ ?

ໄດ້. ມີແຕ່ເຈົ້າຂອງ(ຜູ້ຖືໃບຕາດິນ)ທີ່ເຂົ້າໄປຢູ່ໃນຊັບສິນເທົ່ານັ້ນ ສາມາດຍື່ນຄຳຮ້ອງຂໍໄດ້ ແຕ່ຕ້ອງນຳເອກກະສານທີ່ຕ້ອງການ ແລະໃບສະແດງກັມມະສິດທີ່ດິນໄປສເນີນຳ.

## ສິດທິຄອບຄອງທີ່ດິນຕລອດຊີວິດ ‘Life Estates” ເໝາະທີ່ຈະເປັນປະເພດເຄຫະສະຖານຫຼືບໍ່?

ເໝາະ ຕາບໃດທີ່ດອກເບັ້ຽຂອງສິດທິຄອບຄອງທີ່ດິນຕລອດຊີວິດມີປາກົດຢູ່ໃນໃບຕາດິນ ແລະຜູ້ຖືສິດທິຄອບຄອງທີ່ດິນຕລອດຊີວິດ ດັ່ງກ່າວ ປະຕິບັດຖືກຕ້ອງຕາມເງື່ອນໄຂຂອງຊັບສິນປະເພດເຄຫະສະຖານ.

## ການເຮັດໃຫ້ຊັບສິນເປັນປະເພດເຄຫະສະຖານຊຶ່ງບໍຣິສັດເງິນທຶນເປັນເຈົ້າຂອງຫັ້ນເດ ເປັນແນວໃດ?

ບໍຣິສັດເງິນທຶນເກືອບໝົດທຸກບໍຣິສັດ ມີຄຸນສົມບັດເປັນຊັບສິນເປັນປະເພດເຄຫະສະຖານໄດ້. ໃບຮັບຮອງວ່າເປັນບໍຣິສັດເງິນທຶນຈະຕ້ອງສົມບູນ ແລະຖືກຮັບຮອງຈາກຜູ້ປະເມີນຊັບສິນ ຫຼືອັດຕຣາພາສີຂອງເມືອງມິນນິໂຊຕາ ຫຼືບໍ່ດັ່ງນັ້ນບໍຣິສັດເງິນທຶນດັ່ງກ່າວຈະຕ້ອງຖືກທາງຜູ້ປະເມີນພິຈາຣະນາກວດກາທົບທວນເບິ່ງຄືນເສັຽກ່ອນ. ກະຣຸນາຕິດຕໍ່ໄປຍັງຫ້ອງການຂອງຜູ້ປະເມີນຊັບສິນ ຫຼືອັດຕຣາພາສີຂອງເມືອງມິນນິໂຊຕາ ໂທຣະສັບໝາຍເລກ **612-673-2382** ເພື່ອຂໍຣາຍລະອຽດເພີ່ມຕື່ມ.

## ມີການແຍກຊັບສິນເປັນປະເພດເຄຫະສະຖານແບບພິເສດ ຫຼືບໍ່?

ມີ. ສຳຫຼັບພວກຕາບອດ, ພວກພິການ, ພວກນັກຣົບເກົ່າທີ່ສ່ວນລຸ່ມຂອງຮ່າງກາຍ ແລະຂາເປັນອັມພາດ ແລະຄົນບາງຄົນທີ່ຮັບໃຊ້ຣາຊການທະຫານ. ອັນນີ້ມີແຕ່ແນະນຳເບື້ອງຕົ້ນກ່ຽວກັບຊັບສິນເປັນປະເພດເຄຫະສະຖານສຳຫຼັບຄົນພິການ1b ແບບສັ້ນໆເທົ່ານັ້ນ. ຖ້າຕ້ອງການຂໍ້ມູນເພີ່ມຕື່ມ ຫຼືຢາກໄດ້ຄຳຕອບສຳຫຼັບຄຳຖາມສະເພາະ ກະຣຸນາໂທຣະສັບໄປຍັງພະແນກພາສີຊັບສິນຂອງກະຊວງຣາຍໄດ້ຂອງຣັດມິນນິໂຊຕາ ໝາຍເລກ **(651) 556-6109** ຫຼື **(1 -800-627 -9094)** ຕໍ່ **6-6109** ຜູ້ທີ່ໃຊ້ TDD/TTY ກະຣຸນາໂທຣະສັບໄປຍັງ Minnesota Relay Service ໝາຍເລກ **1 -800-627 -3529** ຖາມຫາ **800-652 -9094** ຕໍ່ **6-0335**

## ການແຍກຊັບສິນເປັນປະເພດເຄຫະສະຖານແບບພິເສດ - ພວກຕາບອດ, ພວກພິການ ແລະພວກນັກຣົບເກົ່າທີ່ສ່ວນລຸ່ມຂອງຮ່າງກາຍ ແລະຂາເປັນອັມພາດ

ຣັດມິນນິໂຊຕາມີ ການແຍກຊັບສິນເປັນປະເພດເຄຫະສະຖານແບບພິເສດ ສຳຫຼັບຊັບສິນປະເພດເຄຫະສະຖານຂອງບຸກຄົນທີ່ະ

1. ຕາບອດ ບຸກຄົນທີ່ຕາບອດເອງ ແລະພັນຣະຍາ ຫຼື
2. ພິການແບບຖາວອນ ແລະໝົດຄວາມສາມາດໂດຍສິ້ນເຊີງ ແລະໄດ້ຮັບໃບຮັບຮອງຈາກທາງໜ່ວຍງານຂອງຣັຖບານ ຫຼືແຫຼ່ງທີ່ຈັດຫາຣາຍໄດ້ ຈົນຜູ້ເຂົ້າຢູ່ອາສັຍໃນຊັບສິນປະເພດເຄຫະສະຖານມີ ເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ສຳຫຼັບການເປັນຄົນພິການ

ການແຍກຊັບສິນເປັນປະເພດ ເຄຫະສະຖານ ສຳຫຼັບຄົນພິການ1b ບໍ່ຄືຊັບສິນປະເພດເຄຫະສະຖານອື່ນໆ ທັງນີ້ຍ້ອນວ່າຄຸນສົມບັດນັ້ນແມ່ນມີແຕ່ສະເພາະບຸກຄົນ ແລະສະພາບຂອງຄວາມພິການ. ອັນນີ້ຈຶ່ງແຕກຕ່າງອອກໄປຈາກຊັບສິນປະເພດເຄຫະສະຖານແບບທັມມະດາ ຊຶ່ງປະເພດທີ່ແຍກນັ້ນແມ່ນອະນຸມັດໃຫ້ຍ້ອນການໃຊ້ຊັບສິນ. ດ້ວຍເຫດນີ້ກະຊວງຣາຍໄດ້ຂອງຣັດມິນນິໂຊຕາຈຶ່ງແນະນຳໃຫ້ວ່າການແຍກປະເພດສຳຫຼັບຄົນພິການນັ້ນ ຈະຕ້ອງຕິດຕາມບຸກຄົນພິການໄປຈາກຊັບສິນໜຶ່ງໄປຍັງອີກຊັບສິນໜຶ່ງ.

ກະຊວງຣາຍໄດ້ຂອງຣັດມິນນິໂຊຕາເປັນຜູ້ບໍຣິຫານ ໂຄງການກ່ຽວກັບຊັບສິນປະເພດເຄຫະສະຖານສຳຫຼັບຄົນພິການ1b ເອງ. ຜູ້ເສັຽພາສີທີ່ຂໍອກຫາຊັບສິນທີ່ແຍກເປັນປະເພດເຄຫະສະຖານສຳຫຼັບຄົນພິການແບບພິເສດນີ້ ຈະຕ້ອງຍື່ນຄຳຮ້ອງກັບກະຊວງຣາຍໄດ້ຂອງຣັດມິນນິໂຊຕາພາຍໃນວັນທີ່ 1 ເດືອນຕຸລາ ຊຶ່ງຈະມີຜົນບັງຄັບໃຊ້ສຳຫຼັບການ ຊຳຣະພາສີຊັບສິນໃນປີປະຕິທິນຕໍ່ໄປ. ຖ້າຕ້ອງການຍື່ນຄຳຮ້ອງ ຫຼືຣາຍລະອຽດເພີ່ມຕື່ມ ກະຣຸນາຕິດຕໍ່ໄປຍັງກະຊວງຣາຍໄດ້ຂອງຣັດມິນນິໂຊຕາ ໝາຍເລກໂທຣະສັບ **(651) 556-6087.** ຄຳຖແລງກ່ຽວກັບພາສີ ແລະຈະສະທ້ອນໃຫ້ເຫັນເຖິງການແຍກຊັບສິນປະເພດເຄຫະສະຖານທີ່ເໝາະສົມ.

## ໂຄງການຫຼຸດຜ່ອນພາສີ ແລະໂຄງການຜັດຜ່ອນການຊຳຣະພາສີ ກະຊວງພາສີເງິນໄດ້<br>ຂ້າພະເຈົ້າເກືອບຈະບໍ່ມີຄວາມສາມາດຈ່າຍພາສີໄດ້ ມີທາງໃດບໍທີ່ຂ້າພະເຈົ້າຈະຫຼຸດຜ່ອນພາສີຂອງຂ້າພະເຈົ້າລົງໄດ້?

ຣັດມິນນິໂຊຕາມີໂຄງການສອງໂຄງການເພື່ອປົດເປື້ອງພາສີຊັບສິນໃຫ້ແກ່ຜູ້ຈ່າຍພາສີ ທີ່ໄດ້ຮັບການຂຶ້ນພາສີຈົນເປັນທີ່ສັງເກດໄດ້ ຫຼືພາສີຊັບສິນຂອງພວກຂະເຈົ້າຢູ່ໃນຣະດັບບໍ່ສົມສ່ວນກັບຣາຍໄດ້ທີ່ພວກຂະເຈົ້າໄດ້ຮັບ. ກະຊວງຣາຍໄດ້ຂອງຣັດມິນນິໂຊຕາເປັນຜູ້ບໍຣິຫານໂຄງການດັ່ງກ່າວ ທັງສອງໂຄງການ. ຖ້າຕ້ອງການແບບຟອມ ກະຣຸນາ ໂທຣະສັບໄປຍັງໝາຍເລກ **651-296-4444** ຫຼືບໍ່ດັ່ງນັ້ນກໍ່ເຂົ້າໄປເບິ່ງຢູ່ໃນອິນເຕີແນັດ ແວັບໄຊ ຂອງກະຊວງຣາຍ ໄດ້ທີ່ www.taxes.state.mn.us. ຖ້າຕ້ອງການຣາຍລະອຽດ ກະຣຸນາໂທຣະສັບໄປຍັງໝາຍເລກ **651-296-3781.** ທັງສອງໂຄງການອາດຈະເປັນ

## ເຄຣດິດຊັບສິນປະເພດເຄຫະສະຖານທີ່ປັບປ່ຽນໄປກັບຣາຍໄດ້ (Income Adjusted Homestead Credit) ແມ່ນຫຍັງ?

ຈຸດປະສົງຂອງເຄຣດິດຊັບສິນປະເພດເຄຫະສະຖານທີ່ປັບປ່ຽນໄປກັບຣາຍໄດ້ (Income Adjusted Homestead Credit) ກໍ່ເພື່ອໃຫ້ແນ່ໃຈວ່າ ພາສີຈະຕ້ອງໄດ້ສັດສ່ວນກັບຣາຍໄດ້ຂອງບຸກຄົນ. ຂໍ້ກຳນົດສຳຫຼັບ ໂຄງການນີ້ມີຫຼາຍຂໍ້. ໃນໂຄງການນີ້ ສະພານິຕິບັນຍັດປະຈຳປີ 2001 ຄຽງຄູ່ໄປກັບການປ່ຽນແປງຢ່າງກ້ວາງຂວາງກ່ຽວກັບເຣື້ອງພາສີຊັບສິນ ໄດ້ເພີ່ມການຊົດໃຊ້ເງິນແທນຄືນສູງສຸດເຖິງ$1590.ແຕ່ຈຸດເຣີ່ມຕົ້ນຂອງການປ່ຽນແປງສຳຫຼັບຣາຍໄດ້ກໍ່ມີເຊັ່ນດຽວກັນ.

- ຜູ້ຢູ່ໃນຄວາມອຸປກາຣະ ຂນາດຂອງຄອບຄົວ ສຳຫຼັບຄົວເຮືອນທີ່ບໍ່ມີຜູ້ອຸປກາຣະ ຂີດຈຳກັດແມ່ນ $85,210. ຂີດຈຳກັດຂອງຣາຍໄດ້ຈະເພີ່ມຂື້ນໄປຕາມຂນາດຂອງຄອບຄົວ ຈົນເຖິງ$101,690 ສຳຫຼັບຄົວເຮືອນທີ່ມີຜູ້ອຸປກາຣະ 5 ຄົນ ຫຼືຫຼາຍກວ່ານັ້ນ.
- ສຳຫຼັບເຈົ້າຂອງເຮືອນທີ່ສູງອາຍຸ ຫຼືພິການ: ຂີດຈຳກັດຂອງຣາຍໄດ້ຈະເພີ່ມຂື້ນໄປຈົນເຖິງ$104,740 ສຳຫຼັບຄົວເຮືອນທີ່ມີຜູ້ອຸປກາຣະ 5 ຄົນ ຫຼືຫຼາຍກວ່ານັ້ນ.

## ໂຄງການ "ທາກິດຕິງ" ຫຼື Targeting ແມ່ນຫຍັງ?

ໂຄງການອັນທີ່ສອງແມ່ນໂຄງການ" ທາກິດຕິງ" ຫຼື Targeting. . ໂຄງການດັ່ງກ່າວ ຈະຊົດໃຊ້ເງິນແທນຄືນຖ້າຫາກວ່າພາສີໄດ້ເພີ່ມຂື້ນເກີນກວ່າ 12 %ແລະການເພີ່ມນັ້ນ ຢ່າງນ້ອຍທີ່ສຸດຕ້ອງຈ່າຍ $100 ໃນປີ 2005.ຜູ້ທີ່ເປັນເຈົ້າຂອງເຮືອນໃນເມືອງມິນນີອາໂປລີສເກືອບທັງໝົດມີສິດທີ່ຈະໄດ້ຮັບເງິນທີ່ຊົດໃຊ້ແທນຄືນ ພາຍໃຕ້ໂຄງການດັ່ງກ່າວນີ້.

## ໂຄງການຜັດຜ່ອນການຊຳຣະພາສີສຳຫຼັບຜູ້ສູງອາຍຸແມ່ນຫຍັງ?

ຂໍ້ກຳນົດຂັ້ນພື້ນຖານກໍ່ຄື ຜູ້ທີ່ເປັນເຈົ້າຂອງຈະຕ້ອງມີອາຍຸ 65 ປີ ຫຼືສູງກວ່າ ແລະຣາຍໄດ້ຄົວເຮືອນຈະຕ້ອງຫຼຸດ $60,000. ນີ້ແມ່ນການຜັດຜ່ອນເຣື້ອງພາສີ ບໍ່ແມ່ນການຫຼຸດຜ່ອນ.ພາສີຈະເພີ່ມພູນຂື້ນຄວບຄູ່ໄປກັບດອກເບັ້ຽໃນອັດຕຣາບໍ່ເກີນ 5% ແລະສິດທິຍຶດໜ່ວງຈະຕ້ອງຕິດພັນໄປກັບຊັບສິນ
ອັນນີ້ມີແຕ່ແນະນຳເບື້ອງຕົ້ນກ່ຽວກັບໂຄງການຜັດຜ່ອນການຊຳຣະພາສີສຳຫຼັບຜູ້ສູງອາຍຸແບບສັ້ນໆເທົ່ານັ້ນ. ຖ້າຕ້ອງການຍື່ນຄຳຮ້ອງ ຫຼືຢາກໄດ້ຄຳຕອບສຳຫຼັບຄຳຖາມສະເພາະ ກະຣຸນາໂທຣະສັບໄປຍັງພະແນກພາສີຊັບສິນຂອງກະຊວງຣາຍໄດ້ຂອງຣັດມິນນີໂຊຕາ ໝາຍເລກ (651) 556-6109 ຫຼື (1 -800-627 -9094) ຕໍ່ 6-6109 ຜູ້ທີ່ໃຊ້ TDD/TTY ກະຣຸນາໂທຣະສັບໄປຍັງ Minnesota Relay Service ໝາຍເລກ 1 -800-627 -3529 ຖາມຫາ 800-652 -9094 ຕໍ່ 6-0335

## ໂຄງການຜັດຜ່ອນການຊຳຣະພາສີສຳຫຼັບຜູ້ສູງອາຍຸໃຊ້ໄດ້ຜົນແນວໃດ?

ໂຄງການນີ້ ບໍ່ແມ່ນໂຄງການໃຫ້ອະພັຍກ່ຽວກັບເຣື້ອງພາສີ ມັນແມ່ນການກູ້ຢືມຈາກຣັດ. ພາສີທີ່ຜັດຜ່ອນການຊຳຣະນີ້ແມ່ນຣັດເປັນຜູ້ຈ່າຍໃຫ້ເລົ່າຕີ ແຕ່ດອກເບັ້ຽຈະຕ້ອງຈ່າຍໃນການກູ້ຢືມຄັ້ງນີ້. ສ່ວນອັດຕຣາດອກເບັ້ຽນັ້ນຈະມີການປັບປ່ຽນທຸກໆປີ ແຕ່ບໍ່ໃຫ້ເກີນ 5% . ສິດທິຍຶດໜ່ວງຈະຕ້ອງຕິດພັນໄປກັບຊັບສິນ.

ຣະຫວ່າງທີ່ຢູ່ໃນໂຄງການດັ່ງກ່າວນີ້ ແຕ່ລະປີ ທ່ານຈະຈ່າຍພາສີຊັບສິນບໍ່ກາຍ 3 ເປີເຊັນຂອງຣາຍໄດ້ຄົວເຮືອນຂອງທ່ານ ບໍ່ວ່າພາສີຊັບສິນຂອງທ່ານໃນປັດຈຸບັນຈະຂື້ນສູງພຽງໃດກໍ່ຕາມ. ສ່ວນທີ່ເຫຼືອນັ້ນ ຣັດຈະຈ່າຍໃຫ້ເອງ. ແຕ່ທ່ານ ຫຼືທາຍາດຂອງທ່ານ ຈະຕ້ອງຈ່າຍເງິນທີ່ທ່ານຂໍຜັດຜ່ອນໄປນັ້ນຄືນ ກ່ອນທີ່ທ່ານຈະທຳການໂອນໃບກັມມະສິດໃນຊັບສິນຂອງທ່ານ.

ໃນເມື່ອການຍື່ນຄຳຮ້ອງຂໍຜັດຜ່ອນການຊຳຣະພາສີຂອງທ່ານໃນຄັ້ງນີ້ ເປັນການຍື່ນເທື່ອທຳອິດ ທ່ານຈະຕ້ອງຈັດຊອກຫາຣາຍງານທີ່ເວົ້າລະອຽດເຖິງການຈຳນອງຊັບ ສິນ, ສິດທິຍຶດໜ່ວງ. ຄຳຕັດສິນຂອງສານ ຫຼືພາສີຊັບສິນທີ່ຍັງບໍ່ທັນຈ່າຍ ມາຕຽມໄວ້. ການຈັດຊອກຫາດັ່ງກ່າວນີ້ແມ່ນທ່ານເອງເປັນຜູ້ອອກຄ່າໃຊ້ຈ່າຍ. ຖ້າທ່ານຊອກຫາ ບໍ່ໄດ້ ທ່ານກໍ່ຍັງຕ້ອງການຣາຍງານທີ່ຢັ້ງຢືນຂໍ້ເທັດຈິງເຫຼົ່ານັ້ນຢູ່. ວັນທີ່ ໃນຣາຍງານດັ່ງກ່າວນັ້ນ ຈະຕ້ອງຂຽນລົງໃສ່ພາຍໃນ 30 ວັນຂອງວັນຍື່ນຄຳຮ້ອງ.

ການເຂົ້າຮ່ວມຢູ່ໃນໂຄງການຜັດຜ່ອນການຊຳຣະພາສີນີ້ ແມ່ນເຮັດດ້ວຍຄວາມສມັກໃຈ. ຖ້າທ່ານຕ້ອງການຢາກເຂົ້າຮ່ວມ ທ່ານຈະຕ້ອງເອົາສິດທິຍຶດໜ່ວງກ່ຽວກັບພາສີໄປຕິດພັນໄວ້ກັບຊັບສິນຂອງທ່ານເສັຽກ່ອນ. ທ່ານຈະຕ້ອງປົດສິດທິຍຶດໜ່ວງອອກໃຫ້ເສັດຮຽບຮ້ອຍເສັຽກ່ອນ ກ່ອນທີ່ທ່ານຈະຂາຍຊັບສິນຂອງທ່ານໄດ້. ໃນກໍຣະນີທີ່ທ່ານເສັຽຊີວິດໄປ ທາຍາດຂອງທ່ານຈະຕ້ອງປົດສິດທິຍຶດໜ່ວງອອກໃຫ້ເສັດຮຽບຮ້ອຍເສັຽກ່ອນ ກ່ອນທີ່ທາຍາດຂອງທ່ານຈະໄດ້ກັມມະສິດທີ່ຂາວສະອາດ. ທ່ານອາດຈະປຶກສາຫາຣືກັບທະນາຍຄວາມ, ນັກວາງແຜນກ່ຽວກັບມໍຣະດົກ ຫຼືສະມາຊິກຂອງຄອບຄົວ ກ່ອນໄປລົງຊື່ຈົດທະບຽນ.

## ໃຜມີສິດທີ່ຈະເຂົ້າໄປຢູ່ໃນໂຄງການຜັດຜ່ອນການຊຳຣະພາສີ ສຳຫຼັບຜູ້ສູງອາຍຸນີ້?

ທ່ານມີສິດທີ່ຈະເຂົ້າໄປຢູ່ໃນໂຄງການດັ່ງກ່າວໄດ້ ຖ້າຫາກວ່າເງື່ອນໄຂທັງໝົດດັ່ງຕໍ່ລົງໄປນີ້ຄົບຖ້ວນ:

1. ຊັບສິນນັ້ນຈະຕ້ອງແມ່ນບຸກຄົນທີ່ ມີອາຍຸ 65 ປີ ຫຼືຫຼາຍກວ່າ ເປັນເຈົ້າຂອງ ແລະເປັນຜູ້ຢູ່ອາສັຍ. ໃນກໍຣະນີທີ່ເປັນຄູ່ສົມຣົດ ທັງສອງຄົນຈະຕ້ອງມີອາຍຸຢ່າງນ້ອຍທີ່ສຸດ 65 ປີ ໃນຂະນະທີ່ການຂໍຜັດຜ່ອນການຊຳຣະພາສີຄັ້ງຖືກອະນຸມັດ. (ຊັບສິນປະເພດເຄຫະສະຖານອາດຈຳແນກອອກເປັນບ່ອນພັກອາສັຍ ຫຼືກະເສດກັມ ຫຼືພາກສ່ວນໜຶ່ງຂອງຕຶກແບບຫຼາຍຢູນິດກໍ່ໄດ້)

2. ຣາຍໄດ້ຄົວເຮືອນທັ້ງໝົດຈະຕ້ອງບໍ່ກາຍ $60,000 ສຳຫຼັບປີປະຕະທິນ ກ່ອນປີທີ່ຍື່ນຄຳຮ້ອງຄັ້ງຕຳອິດ
3. ເຮືອນນັ້ນຈະຕ້ອງມີຢ່າງນ້ອຍທີ່ສຸດໜຶ່ງໃນຈຳນວນເຈົ້າຂອງເຮືອນ ເປັນເຈົ້າຂອງ ແລະເປັນຜູ້ຢູ່ອາສັຍມາແລ້ວຕ່ຳສຸດ 15 ປີ ກ່ອນປີທີ່ຍື່ນຄຳຮ້ອງຄັ້ງທຳອິດ
4. ຈະຕ້ອງບໍ່ມີ ສິດທິຍຶດໜ່ວງກ່ຽວກັບພາສີຂອງຣັດ ແລະຂອງຣັຖບານກາງ ຫຼືຄຳຕັດສິນກ່ຽວກັບສິດທິຍຶດໜ່ວງໃນຊັບສິນ
5. ງົບດຸນໜີ້ສິນທີ່ຍັງບໍ່ທັນໄດ້ຈ່າຍທັງໝົດ ຈາກການຈຳນອງ ແລະຈາກສິດທິຍຶດໜ່ວງໃນຊັບສິນອື່ນໆ ຈະຕ້ອງບໍ່ເກີນ 75 ເປີເຊັນ ຂອງຣາຄາຕລາດຂອງຊັບສິນທີ່ຄາດຄະເນເອົາ.

## ຂ້າພະເຈົ້າຈະຍື່ນຄຳຮ້ອງຂໍຜັດຜ່ອນການຊຳຣະພາສີສຳຫຼັບຜູ້ສູງອາຍຸໄດ້ແນວໃດ?

ຄຳຮ້ອງມີຢູ່ທີ່ຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ ແລະໄປຊອກເອົາຢູ່ທີ່ອອນລາຍທີ່ແວັບໄຊຂອງກະຊວງຣາຍໄດ້ຂອງຣັດມິນນີໂຊຕາທີ່ www.taxes.state.mn.us ຄຳຮ້ອງທຸກໆສະບັບຈະຕ້ອງຍື່ນໃຫ້ແລ້ວພາຍໃນວັນທີ່ 1 ເດືອນກໍຣະກະດາ ເພື່ອຜັດຜ່ອນສ່ວນໜຶ່ງຂອງພາສີຂອງປີຕໍ່ມາ. ທ່ານອາດຈະຍື່ນຄຳຮ້ອງໃນປີທີ່ທ່ານມີອາຍຸ 65 ປີ ແຕ່ການຜັດຜ່ອນຈະບໍ່ຖືກອະນຸມັດຈົນກວ່າປີຕໍ່ໄປຈະມາເຖິງ.

## ເຄຣດິດກ່ຽວກັບພັຍວິບັດແມ່ນຫຍັງ?

ເຄຣດິດຊະນິດນີ້ ແມ່ນມອບໃຫ້ຊັບສິນສ່ວນຕົວທີ່ຖືກທຳລາຍເສັຽຫາຍຍ້ອນບໍ່ເຈຕນາ ແລະຍ້ອນອຸບັດຕິເຫດ. ຖ້າຄວາມເສັຽຫາຍທາງໂຄງຮ່າງຂອງຊັບສິນ ມີເຖິງ 50 % ຫຼືຫຼາຍກວ່ານັ້ນແລ້ວ ຊັບສິນດັ່ງກ່າວກໍ່ຈະໃຊ້ການບໍ່ໄດ້ ແລະໃຊ້ເປັນບ່ອນຢູ່ອາສັຍກໍ່ບໍ່ໄດ້ເຊັ່ນດຽວກັນ. ເຈົ້າຂອງຊັບສິນປະເພດເຄຫະສະຖານ ຫຼືບໍ່ແມ່ນເຄຫະສະຖານ ອາດຈະຍື່ນຄຳຮ້ອງຂໍຫຼຸດຈຳນວນພາສີຊັບສິນ ທີ່ຈ່າຍສຳຫຼັບປີທີ່ຖືກທຳລາຍເສັຽຫາຍໄດ້.

ການຄຳນວນຈຳນວນເງິນພາສີທີ່ຫຼຸດຜ່ອນນັ້ນ ແມ່ນເອົາຈຳນວນເດືອນເຕັມ ທີ່ຊັບສິນດັ່ງກ່າວໃຊ້ການບໍ່ໄດ້ ແລະໃຊ້ເປັນບ່ອນຢູ່ອາສັຍບໍ່ໄດ້ ແລ້ວເອົາຣາຄາທີ່ຕັ້ງໃຫ້ໂຄງຮ່າງ ມາຄູນໃຫ້ພາສີສຸດທິ. ສຸດທ້າຍເອົາເລກເສດສ່ວນ (ຈຳນວນເດືອນເຕັມທີ່ຊັບສິນໃຊ້ ເປັນບ່ອນຢູ່ອາສັຍບໍ່ໄດ້ ຫານໃຫ້ 12) ໄປຄູນໃຫ້ຜົນທີ່ໄດ້ຮັບ.

. ຕົວຢ່າງເຊັ່ນ  ຣາຄາຕລາດທີ່ຄາດກະຂອງເຮືອນ ແມ່ນ $100,000 ແລະພາສີສຸດທິ ແມ່ນ $3,000 ເຮືອນຫຼັງດັ່ງກ່າວຖືກໄຟໄໝ້ເສັຽຫາຍໃນວັນທີ່ 10 ເດືອນກໍຣະກະດາ 2003 ແລະໃຊ້ເປັນບ່ອນຢູ່ອາສັຍຄືນໄດ້ໃນວັນທີ່ 7 ເດືອນພຶສຈິກາ 2003.ຣາຄາໂຄງຮ່າງແມ່ນ $ 75,000 ແລະອອກມາເປັນອັດຕຣາສ່ວນ 75%. ແລ້ວເອົາໄປຄູນໃຫ້ພາສີສຸດທິ ຄື $3,000. ດ້ວຍເຫດນີ້ $2,250 ຈຶ່ງເປັນພາສີທີ່ຕັ້ງໄວ້ໃຫ້ໂຄງຮ່າງ. ຫຼັງຈາກນັ້ນ ໃຫ້ນຳຈຳນວນເງິນດອນລາດັ່ງກ່າວໄປຄູນໃຫ້ເລກເສດສ່ວນ 3/12 ຊຶ່ງເປັນຈຳນວນຂອງເດືອນເຕັມທີ່ຜູ້ຈ່າຍພາສີບໍ່ສາມາດຢູ່ອາສັຍໃນຊັບສິນນັ້ນໄດ້. ຜົນອອກມາຄື $562.50 ນັ້ນແມ່ນເຄຣດິດທີ່ເອົາໃຫ້ເຈົ້າຂອງເຮືອນ.

## ຂ້າພະເຈົ້າຈະຍື່ນຄຳຮ້ອງຂໍເຄຣດິດກ່ຽວກັບພັຍວິບັດໄດ້ແນວໃດ?

ກ່ອນອື່ນ ກະຣຸນາໂທຣະສັບໄປຍັງຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ ເພື່ອບອກໃຫ້ຊາບເຖິງຄວາມເສັຽຫາຍຂອງໂຄງຮ່າງຂອງຊັບສິນ. ເພື່ອດຳເນີນການຂໍເຄຣດິດກ່ຽວກັບພັຍວິບັດຂອງສ່ວນຕົວບຸກຄົນ ທ່ານຈະຕ້ອງຂຽນຄຳຮ້ອງ ແລ້ວຍື່ນໄປຍັງຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ. ການຍື່ນຄຳຮ້ອງດັ່ງກ່າວນີ້ໃຫ້ເຮັດໄວທີ່ສຸດເທົ່າທີ່ຈະໄວໄດ້ ຕາມສະພາບຄວາມເປັນຈິງ ຫຼັງຈາກຄວາມເສັຽຫາຍໄດ້ເກີດຂຶ້ນແລ້ວ. ຕໍ່ມາ ຖ້າພໍຫາໄດ້ ທ່ານຈະຕ້ອງມີສຳເນົາຣາຍງານຄວາມເສັຽຫາຍຂອງບໍຣິສັດປະກັນພັຍຂອງທ່ານມາໃວ້. ສຸດທ້າຍ ທ່ານຈະຕ້ອງຕິດຕໍ່ໄປຍັງຫ້ອງການຝ່າຍປະເມີນພາສີຊັບສິນຂອງເມືອງມິນນີອາໂປລີສ ເມື່ອວຽກສ້ອມແປງຊັບສິນຂອງທ່ານໃຫ້ຢູ່ອາສັຍໄດ້ ເສັດຮຽບຮ້ອຍ ຫຼືເມື່ອຊັບສິນຂອງທ່ານໄດ້ຖືກຂາຍໄປແລ້ວ.

## ວັນເດືອນປີທີ່ສຳຄັນກ່ຽວພັນກັບພາສີຊັບສິນ

| | |
|---|---|
| ເດືອນມັງກອນ | • ວັນທີ່ 2 ເດືອນມັງກອນ ວັນທີ່ຣາຄາ ແລະການຈຳແນກປະເພດຂອງຊັບສິນໄດ້ກຳນົດຂື້ນ ວັດຖຸປະສົງກໍ່ເພື່ອປະເມີນຣາຄາຊັບສິນນັ້ນເອງ |
| ເດືອນກຸມພາ | • ສົ່ງໃບແຈ້ງເຕືອນເພື່ອບອກຣາຄາຊັບສິນ ໄປໃຫ້ທ່ານທາງໄປສະນີ ໃນເດືອນກຸມພາ ຫຼືເດືອນມີນາ |
| ເດືອນມີນາ | • ສົ່ງຄຳຖແລງກ່ຽວກັບພາສີຣາຄາຊັບສິນ ໄປທາງໄປສະນີ ໃນທ້າຍເດືອນມີນາ.<br>• ທາງເມືອງມິນນີອາໂປລີສຈະຈັດໃຫ້ມີກອງປະຊຸມຣະຫວ່າງເຈົ້າຂອງຊັບສິນ ແລະຜູ້ປະເມີນ ( Open Book Meetings) ຂື້ນ |
| ເດືອນເມສາ | • ຖ້າທ່ານຕ້ອງການຢາກອຸທອນເຣື້ອງການປະເມີນຣາຄາຊັບສິນຂອງທ່ານ ໄປຍັງກອງປະຊຸມກ່ຽວກັບການອຸທອນ ແລະຄວາມາເມີພາກຂອງເມືອງມິນນີອາໂປລີສ ( The City of Minnesota Board of Appeal and Equalization) ໃຫ້ໂທຣະສັບໄປນັດເສັຽກ່ອນ<br>• ວັນທີ່ 30 ເດືອນເມສາແມ່ນມື້ສຸດທ້າຍຂອງການຍື່ນອຸທອນໄປຫາສານພາສີຂອງຣັດມິນນີໂຊຕາ |
| ເດືອນພຶສພາ | • ວັນທີ່ 15 ເດືອນພຶສພາ – ມື້ທີ່ກຳນົດໃຫ້ຈ່າຍພາສີເຄິ່ງຕໍາອິດຂອງປີປັດຈຸບັນ<br>• ຖ້າທ່ານຕ້ອງການຢາກອຸທອນເຣື້ອງການປະເມີນຣາຄາຊັບສິນຂອງທ່ານ ໄປຍັງກອງປະຊຸມກ່ຽວກັບການອຸທອນ ແລະຄວາມສເມີພາກຂອງເຄົາຕີເຮັນເນີພິນ (The Hennepin Board of Appeal and Equalization) ໃຫ້ໂທຣະສັບໄປນັດເສັຽກ່ອນ<br>• ຄຳຖແລງກ່ຽວກັບເຮືອນທີ່ຜລິດໂດຍໂຮງງານຈະຖືກສົ່ງອອກໄປທາງໄປສະນີ. |
| ເດືອນກໍຣະກະດາ | • ວັນທີ່ 1 ເດືອນກໍຣະກະດາ –ມື້ ທີ່ກຳນົດໃຫ້ຍື່ນຄຳຮ້ອງສຳຫຼັບໂຄງການຜັດຜ່ອນຈ່າຍພາສີ ສຳຫຼັບຜູ້ສູງ ອາຍຸ |
| ເດືອນສິງຫາ | • ວັນທີ່ 31 ເດືອນສິງຫາ - ມື້ທີ່ກຳນົດໃຫ້ຈ່າຍພາສີເຄິ່ງທຳອິດຂອງປີປັດຈຸບັນສຳຫຼັບເຮືອນທີ່ຜລິດໂດຍໂຮງງານ |
| ເດືອນກັນຍາ | |
| ເດືອນຕຸລາ | • ວັນທີ່ 1 ເດືອນຕຸລາ – ມື້ທີ່ກຳນົດໃຫ້ຍື່ນຄຳຮ້ອງສຳຫຼັບການແຍກຊັບສິນເປັນປະເພດເຄຫະສະຖານແບບພິເສດຂອງພວກຕາບອດ, ພວກພິການ ແລະພວກນັກຣົບເກົ່າທີ່ສ່ວນລຸ່ມຂອງຮ່າງກາຍ ແລະຂາເປັນອັມພາດ ໄປຍັງກະຊວງຣາຍໄດ້ ຂອງຣັດມິນນີໂຊຕາ<br>• ວັນທີ່ 15 ເດືອນຕຸລາ – ມື້ທີ່ກຳນົດໃຫ້ຈ່າຍພາສີເຄິ່ງທີ່ສອງຂອງປີປັດຈຸບັນ |
| ເດືອນພຶສຈິ ກາ | • ຄຳຖແລງກ່ຽວກັບພາສີ ຊັບສິນ ຫຼື Truth in Taxation ຖືກສົ່ງອອກໄປທາງໄປສະນີ<br>• ວັນທີ່ 15 ເດືອນພຶສຈິກາ –ມື້ທີ່ກຳນົດໃຫ້ຈ່າຍພາສີເຄິ່ງທີ່ສອງຂອງປີປັດຈຸບັນສຳຫຼັບຊັບສິນກະເສດກັມ<br>• ວັນທີ່ 15 ເດືອນພຶສຈິກາ –ມື້ທີ່ກຳນົດໃຫ້ຈ່າຍພາສີເຄິ່ງທີ່ສອງຂອງປີປັດຈຸບັນສຳຫຼັບເຮືອນທີ່ຜລິດໂດຍໂຮງງານ |
| ເດືອນທັນວາ | • ໜ່ວຍງານຂອງຣັຖບານທ້ອງຖິ່ນຮັບຮອງເອົາງົບປະມານຂອງຕົນຄັ້ງສຸດທ້າຍ<br>• ວັນທີ່ 1 ເດືອນທັນວາ – ການເປັນເຈົ້າຂອງ ແລະບ່ອນຢູ່ອາສັຍ ຄືຄຸນສົມບັດທີ່ຕ້ອງການ ເພື່ອແຍກຊັບສິນເປັນປະເພດເຄຫະສະຖານສຳຫຼັບພາສີປີໜ້າ<br>• ວັນທີ່ 15 ເດືອນທັນວາ – ມື້ສຸດທ້າຍເພື່ອຍື່ນຄຳຮ້ອງຂໍແຍກຊັບສິນເປັນປະເພດເຄຫະສະຖານສຳຫລັບພາສີປີໜ້າ |